*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 15-20*
*https://doi.org/10.69692/SUJMRD12(Fast track)15*

# The Situation of Student Dropout in Lower Secondary School Students in Had Pang cluster, Pak Ou District, Luang Prabang Province

**Yearher Liamaher*[1], Somchay Phaignavong[2], Sommay Silivanh[3], Khamphy Sirirath[4], Dalyvone Keopaseuth[4], and Houmpheng Oudomsit[4]**

*Department of Political and Science, Faculty of Education, Souphanouvong University, Lao PDR*

***Correspondence:** Yearher LIAMAHER, Department of Political and Science, Faculty of Education, Souphanouvong University,*
*E-mail: yearherfoe@gmail.com,*
*Tel: +856 20 99427171*

***Article Info:***
***Submitted: January 30, 2026***
***Revised: February 05, 2026***
***Accepted: February 13, 2026***

**Abstract**

This research aimed to: 1) examine the level of opinions toward factors influencing school dropout among secondary school students in the Hat Pang cluster, Pak Ou District, Luang Prabang Province; and 2) identify the factors affecting school dropout among secondary school students in the Hat Pang cluster, Pak Ou District, Luang Prabang Province. This study employed a survey research design. The sample consisted of 75 former secondary school students in the Hat Pang cluster, Pak Ou District, Luang Prabang Province, who had already dropped out of school. A questionnaire was used to collect data, and the data were analyzed using the mean, standard deviation, and multiple regression analysis. The research findings revealed that:

1) The overall level of secondary school students' opinions toward the factors contributing to school dropout across five aspects educational context, personal factors, family factors, economic factors, and social factors was at a high level ($\overline{X} = 3.90$, S.D. = 0.30).

2) The factors affecting school dropout among secondary school students in the Hat Pang cluster, Pak Ou District, Luang Prabang Province were family factors and educational context factors. These factors had predictive power and were able to explain 23.00% of the variance in the factors influencing school dropout in the Hat Pang cluster, Pak Ou District, Luang Prabang Province.

**Keywords:** *Student dropout situation, influencing factors, lower secondary school students*

## 1. ພາກສະເໜີ

ການສຶກສາໃນລາວປັດຈຸບັນມີບົດບາດຫຼາຍຢ່າງ ໂດຍສະເພາະແມ່ນການພັດທະນາຂະແໜງການສຶກສາ ແລະ ກິລາເພື່ອແນໃສ່ການພັດທະນາລະບົບການສຶກສາສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດມີຄຸນສົມບັດສົນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ (ກະຊວງສຶກສາທິການ ແລະ ກິລາ, 2015).

ສະນັ້ນ, ອຳນາດການປົກຄອງແຂວງ, ກໍ່ຄືພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ ຈຶ່ງໄດ້ສົມທົບກັບອຳນາດການປົກຄອງ ເມືອງປາກອູ ໂດຍສະເພາະ ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ ສຸມໃສ່ການພັດທະນາການສຶກສາໃນທຸກລະດັບເພື່ອສົ່ງເສີມໃຫ້ລູກຫຼານພໍ່ແມ່ປະຊາຊົນໄດ້ຮັບການສຶກສາທີ່ມີຄຸນະພາບ ໂດຍສະເພາະການສຶກສາພາກບັງຄັບທີ່ໄດ້ຮັບການເອົາໃຈໃສ່ໃກ້ສິດຕິດແທດຊີ້ນຳໂດຍກົງ ຈາກອຳນາດການປົກຄອງຂັ້ນເມືອງ ແລະ ແຂວງ ສົມທົບກັບບັນດາພາກສ່ວນທຸລະກິດ, ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງໂອກາດໃນການພັດທະນາຄຸນະພາບການສຶກສາແບບມີສ່ວນຮ່ວມ, ເພື່ອປັບປຸງການຮຽນ-ການສອນ ແລະ ຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ, ຫຼຸດຜ່ອນຄວາມແຕກໂຕນກັນ, ໃນນີ້ ແຂວງຫຼວງພະບາງ ມີ 2 ເມືອງທີ່ດ້ອຍໂອກາດ ທາງການສຶກສາຄື: ເມືອງປາກອູ ແລະ ເມືອງໂພນທອງ, ໃນນັ້ນ ເມືອງປາກອູ ມີອັດຕາການປະລະການຮຽນໃນຊັ້ນປະຖົມສຶກສາແມ່ນ 4.6, ອັດຕາການປະລະການຮຽນມັດທະຍົມຕອນຕົ້ນແມ່ນ 17.8% ແລະ ອັດຕາການປະລະການຮຽນມັດທະຍົມຕອນປາຍແມ່ນ 18.9% (ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ, 2025). ໃນທົ່ວເມືອງມີໂຮງຮຽນມັດທະຍົມ 7 ແຫ່ງ (ມັດທະຍົມຕອນຕົ້ນ 4 ແຫ່ງ ແລະ ມັດທະຍົມສົມບູນ 3 ແຫ່ງ) ມີຫ້ອງຮຽນ 58 ຫ້ອງທຽບສົກຮຽນແລ້ວ ເພີ່ມ 1 ຫ້ອງມີ, ຈຳນວນນັກຮຽນ 1,816 ຄົນ, ນັກຮຽນອອກກາງປີ 143 ຄົນ. ມີຄູສອນທັງໝົດ 120 ຄົນ. ໃນນັ້ນ, ມີຄູອາສາສະໝັກທັງໝົດ 5 ຄົນ, ເຖິງແມ່ນວ່າທາງຫ້ອງການສຶກສາທິການ ແລະ ກິລາ ໄດ້ມີມະຕິກອງປະຊຸມຜູ້ບໍລິຫານການສຶກສາ, ມີການກຳນົດບັນດາໜ້າວຽກງານຈຸດສຸມທີ່ເປັນບູລິມະສິດ ເພື່ອຈັດຕັ້ງປະຕິບັດບັນດາຄາດ ໝາຍທີ່ສະພາປະຊາຊົນແຂວງຮັບຮອງເອົາເພື່ອໃຫ້ເປັນທິດທາງໃນການຈັດຕັ້ງປະຕິບັດ, ແຕ່ໃນພາກການຈັດຕັ້ງປະຕິບັດຕົວຈິງແລ້ວເຫັນວ່າ ແຕ່ລະພາກສ່ວນຍັງບໍ່ໄດ້ເປັນເຈົ້າການ ແລະ ເອົາໃຈໃສ່ ປະຕິບັດຕາມເນື້ອໃນ ແລະ ທິດຊີ້ນຳທີ່

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ກຳນົດໃນມະຕິຂອງກອງປະຊຸມຜູ້ບໍລິຫານການສຶກສາປະຈຳປີເທົ່າທີ່ຄວນອັນເຮັດໃຫ້ຍັງມີຫຼາຍບັນຫາຄົງຄ້າງໂດຍສະເພາະແມ່ນ: ການເຂົ້າຮຽນລວມໃນຊັ້ນມັດທະຍົມ, ອັດຕາຄ້າງຫ້ອງໃນແຕ່ລະຊັ້ນຮຽນຍັງສູງບໍ່ບັນລຸຕາມຄາດໝາຍ, ຄຸນນະພາບການຮຽນແມ່ນຍັງບໍ່ທັນສູງເທົ່າທີ່ຄວນ ແລະ ການປະລະການຮຽນນັບມື້ແນວໂນ້ມເພີ່ມຂຶ້ນໃນແຕ່ລະປີ (ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ, 2025).

ແນວຄິດກ່ຽວກັບ "ການປະລະການຮຽນ" (Student Engagement) ເກີດຂຶ້ນຈາກຄວາມພະຍາຍາມຂອງນັກວິຊາການໃນການອະທິບາຍວ່າ ເຫດໃດນັກຮຽນບາງກຸ່ມ ຈຶ່ງປະສົບຜົນສຳເລັດທາງການຮຽນ ໃນຂະນະທີ່ບາງກຸ່ມມີຜົນການຮຽນຕໍ່າ ຫຼື ອອກກາງຄັນຈາກລະບົບການສຶກສາ. ໃນຊ່ວງທົດສະວັດ 1980-1990 ນັກວິຊາການໄດ້ໃຫ້ຄວາມສົນໃຈຕໍ່ພຶດຕິກຳການເຂົ້າຮ່ວມຂອງນັກຮຽນ ເຊັ່ນ: ການເຂົ້າຮຽນ ແລະ ການເຮັດກິດຈະກຳໃນຊັ້ນຮຽນ (Finn, 1989) ຕໍ່ມາແນວຄິດນີ້ໄດ້ຖືກພັດທະນາໃຫ້ຄອບຄຸມດ້ານອາລົມ ແລະ ດ້ານສະຕິປັນຍາ ຈົນກາຍເປັນແນວຄິດຫຼາຍມິຕິ.

Fredricks et al. (2004) ໄດ້ສະເໜີວ່າ ການປະລະການຮຽນປະກອບດ້ວຍ 3 ອົງປະກອບຫຼັກ ຄື: ການປະລະການຮຽນດ້ານພຶດຕິກຳ, ດ້ານອາລົມ ແລະ ດ້ານສະຕິປັນຍາ ເຊິ່ງແນວຄິດນີ້ໄດ້ຮັບການຍອມຮັບຢ່າງກວ້າງຂວາງໃນວົງການວິໄຈດ້ານການສຶກສາ. ການຂາດການປະລະການຮຽນຂອງນັກຮຽນເປັນບັນຫາສຳຄັນຂອງລະບົບການສຶກສາທົ່ວໂລກ ໂດຍສະແດງອອກໃນຮູບແບບ ການຂາດຮຽນ, ຂາດຄວາມສົນໃຈໃນຊັ້ນຮຽນ, ຜົນການຮຽນຕໍ່າ ແລະ ການອອກກາງຄັນ (Appleton et al., 2008).

ດັ່ງນັ້ນ, ຈຶ່ງເກີດແຮງຈູງໃຈໃຫ້ແກ່ພວກຂ້າພະເຈົ້າເພື່ອສຶກສາສະພາບການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາພາຍໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ເຊິ່ງເປັນບັນຫາສຳຄັນຕໍ່ກັບການພັດທະນາການສຶກສາຮໍ່າຮຽນຂອງນັກຮຽນໃນຂົງເຂດນັ້ນ, ຍັງມີຈຳນວນນັກຮຽນຫຼາຍຄົນຢູ່ໃນແຕ່ລະບ້ານທີ່ປະລະການສຶກສາຮໍ່າຮຽນຂອງຕົນເອງ, ຮຽນບໍ່ຈົບ ແລະ ອອກໂຮງຮຽນກ່ອນ, ຈຶ່ງມີຈຸດປະສົງໃນການຄົ້ນຄວ້າຄັ້ງນີ້ແມ່ນ 1) ສຶກສາລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ແລະ 2) ປັດໄຈທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງ ທີ່ໃຊ້ເຂົ້າໃນການວິໄຈຄັ້ງນີ້ ແມ່ນນັກຮຽນຊັ້ນມັດທະຍົມສຶກສາທີ່ປະລະການຮຽນຢູ່ພາຍໃນ ກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ເຊິ່ງມີຈຳນວນນັກຮຽນທັງໝົດ ທີ່ປະລະການຮຽນ ມີຈຳນວນ 75 ຄົນ ໂດຍການເລືອກແບບເຈາະຈົງ (Purposive sampling) (Krejcie & Morgan, 1970).

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ ໃຊເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນແບບສອບຖາມກ່ຽວກັບ ປັດໄຈທີ່ເຮັດໃຫ້ນັກຮຽນຊັ້ນມັດທະຍົມສຶກສາປະລະການຮຽນພາຍໃນ ກຸ່ມຫາດປາງ ເມືອງ ປາກອູ ແຂວງ ຫຼວງພະບາງ ໂດຍນຳໃຊ້ທິດສະດີຂອງ Fredricks et al. (2004), Deci & Ryan (2000) & Finn (1989) ແບ່ງອອກເປັນ 3 ພາກສ່ວນ ຄື:

- ພາກສ່ວນທີ 1: ສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ
- ພາກສ່ວນທີ 2: ສອບຖາມກ່ຽວກັບສະພາບການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມ ພາຍໃນກຸ່ມຫາດປາງ ເມືອງປາອູ ແຂວງ ຫຼວງພະບາງ.
- ພາກສ່ວນທີ 3: ສອບຖາມກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການປະລະການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາ ພາຍໃນກຸ່ມຫາດປາງ ເມືອງ ປາກອູ ແຂວງ ຫຼວງພະບາງ ເຊິ່ງປະກອບມີ 5 ປັດໄຈ ຄື: ດ້ານສະຖານການສຶກສາ, ດ້ານສ່ວນຕົວບຸກຄົນ, ດ້ານຄອບຄົວ, ດ້ານເສດຖະກິດ ແລະ ດ້ານສັງຄົມຂອງນັກຮຽນທີ່ປະລະການຮຽນ.

ລັກສະນະຂອງແບບສອບຖາມເປັນມາດຕາສ່ວນປະເມີນຄ່າ 5 ລະດັບ (Likert Scale) ຄື:

ຄະແນນ 5 ໝາຍເຖິງ ມີຄວາມເປັນຈິງຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງ ມີຄວາມເປັນຈິງຫຼາຍ

ຄະແນນ 3 ໝາຍເຖິງ ມີຄວາມເປັນຈິງປານກາງ

ຄະແນນ 2 ໝາຍເຖິງ ມີຄວາມເປັນຈິງໜ້ອຍ

ຄະແນນ 1 ໝາຍເຖິງ ມີຄວາມເປັນຈິງໜ້ອຍທີ່ສຸດ

**ໂດຍມີການຫາຄຸນນະພາບຂອງເຄື່ອງມື ດັ່ງນີ້:**

ນຳເອົາແບບສອບຖາມທີ່ສ້າງຂຶ້ນ ສະເໜີຜູ້ຊ່ຽວຊານວຸດທິ ເພື່ອກວດສອບຄວາມຖືກຕ້ອງ, ຄວາມເໝາະສົມ ແລະ ຄວາມສອດຄ່ອງທາງດ້ານເນື້ອໃນ ກັບ ຈຸດປະສົງ ທີ່ມີຄ່າ IOC =0.83 ແລະ ໄດ້ຄ່າຄວາມເຊື່ອໝັ້ນຂອງແບບສອບຖາມທີ່ມີ $\alpha = 0.85$ ແລ້ວຜູ້ຄົ້ນຄວ້າຈຶ່ງໄດ້ນຳໄປເກັບຂໍ້ມູນຈິງກັບກຸ່ມຕົວຢ່າງທີ່ກຳນົດ.

### 2.3 ການເກັບກຳຂໍ້ມູນ

ການເກັບກຳລວບລວມຂໍ້ມູນໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ດຳເນີນການດັ່ງຕໍ່ໄປນີ້:

1) ຂໍໜັງສືສະເໜີການພົວພັນລົງເກັບຂໍ້ມູນຈາກຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ແລ້ວນຳ ໄປສະເໜີຕໍ່ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ ເພື່ອໃຫ້ຫ້ອງການສຶກສາທິການ ແລະ ກິລາ ເພື່ອແຈ້ງເຈດຈຳນົງຫາໂຮງຮຽນກຸ່ມເປົ້າໝາຍ ເພື່ອພົວພັນເອົາລາຍຊື່ນັກຮຽນທີ່ປະລະການຮຽນ ໃນລະດັບຊັ້ນມັດທະຍົມສຶກສາ.

2) ເມື່ອໄດ້ຂໍ້ມູນກຸ່ມເປົ້າໝາຍຈາກໂຮງຮຽນສຳເລັດແລ້ວ ແມ່ນໄດ້ນຳເອົາແບບສອບຖາມ ລົງໄປເກັບກຳ ດ້ວຍຕົນເອງຕາມທີ່ກະກຽມໄວ້ຈຳນວນ 75 ສະບັບ ໄປແຈກຢາຍໃຫ້ກຸ່ມເປົ້າໝາຍທີ່ປະລະການຮຽນ ໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ເພື່ອຕອບແບບສອບຖາມ ໂດຍໄດ້ໃຫ້ຄວາມໃກ້ຊິດ ແລະ ຊ່ວຍເຫຼືອໃນເວລາ ທີ່ເຂົາເຈົ້າຕອບ ເພື່ອໃຫ້ໄດ້ຂໍ້ມູນທີ່ຄົບຖ້ວນ ແລະ ຊັດເຈນ.

3) ຫຼັງຈາກ ກຸ່ມເປົ້າໝາຍ ໄດ້ຕອບແບບສອບຖາມສຳເລັດແລ້ວກໍ່ໄດ້ສັງລວມເກັບກຳແບບສອບຖາມ ເພື່ອກວດຄວາມຖືກຕ້ອງ ແລະ ຄົບຖ້ວນ ແລ້ວນຳມາວິເຄາະຂໍ້ມູນຕາມຂັ້ນຕອນຕໍ່ໄປ.

### 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນສຳລັບການຄົ້ນຄ້ວາຄັ້ງນີ້ ຜູ້ສຶກສາໄດ້ນຳໃຊ້ ໂປຣແກຣມ SPSS version 21 ວິເຄາະຂໍ້ຫາຄ່າສ່ວນຮ້ອຍ (%), ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard deviation) ແລະ ວິເຄາະການຖົດຖອຍແບບພະຫຸຄູນ (Multiple Regression Analysis).

ເກນທີ່ໃຊ້ໃນການແປຄວາມໝາຍ

- ຄະແນນສະເລ່ຍ 4.21 - 5.00 ໝາຍເຖິງ ມີຄວາມເປັນຈິງຫຼາຍທີ່ສຸດ
- ຄະແນນສະເລ່ຍ 3.41 - 4.20 ໝາຍເຖິງ ມີຄວາມເປັນຈິງຫຼາຍ
- ຄະແນນສະເລ່ຍ 2.61 - 3.40 ໝາຍເຖິງ ມີຄວາມເປັນຈິງປານກາງ
- ຄະແນນສະເລ່ຍ 1.81 -2.60 ໝາຍເຖິງ ມີຄວາມເປັນຈິງໜ້ອຍ
- ຄະແນນສະເລ່ຍ 1.00 - 1.80 ໝາຍເຖິງ ມີຄວາມເປັນຈິງໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

### 3.1 ລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ

1) ຜົນການວິເຄາະລະດັບຄວາມຄິດເຫັນຕໍ່ ປັດໄຈດ້ານສະຖານການສຶກສາ

ຜົນການວິເຄາະ ພົບວ່າ ໂດຍລວມແລ້ວ ລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ຕໍ່ປັດໄຈດ້ານສະຖານການສຶກສາ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ໂດຍມີຄ່າ $\overline{X} =$ 4.01 ແລະ SD=0.36 ໂດຍສະແດງໃຫ້ເຫັນວ່າ ໂຮງຮຽນບໍ່ມີຫໍພັກຮອງຮັບນັກຮຽນທີ່ຢູ່ບ້ານໄກ ມີຄ່າ $\overline{X} = 4.24$ ແລະ SD=0.73, ຍ້ອນໂຮງຮຽນຢູ່ໄກ ຍາກຕໍ່ການເດີນທາງໄປ-ມາ ມີຄ່າ $\overline{X} = 4.09$ ແລະ SD=0.72, ໂຮງຮຽນບໍ່ມີນະໂຍບາຍຕໍ່ນັກຮຽນທຸກຍາກ ແລະ ນັກຮຽນຊົນເຜົ່າ ແລະ ຂາດຄູສອນ, ອຸປະກອນຮັບໃຊ້ການຮຽນ-ການສອນບໍ່ພຽງພໍ ມີຄ່າ $\overline{X} = 4.05$, SD=0.76 ແລະ SD=0.78 ຕາມລະດັບ, ຂໍ້ຈຳກັດດ້ານພາສາທາງທີ່ໃຊ້ເຂົ້າໃນການຮຽນ-ການສອນ ມີຄ່າ $\overline{X} =$ 4.03 ແລະ SD=0.77, ຍ້ອນການຖືກຈຳແນກຈາກຄູ ຫຼື ໝູ່ຄູ່ພາຍໃນໂຮງຮຽນ ມີຄ່າ $\overline{X} = 3.93$ ແລະ SD=0.75 ແລະ ຍ້ອນບໍ່ມີການຊ່ວຍເຫຼືອດ້ານການຮຽນສຳລັບນັກຮຽນທີ່ຮຽນອ່ອນ ມີຄ່າ $\overline{X} = 3.73$ ແລະ SD=0.72.

2) ຜົນການວິເຄາະລະດັບຄວາມຄິດເຫັນຕໍ່ ປັດໄຈດ້ານສ່ວນຕົວຂອງນັກຮຽນ

ຜົນການວິເຄາະ ພົບວ່າ ໂດຍລວມແລ້ວ ລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ຕໍ່ປັດໄຈດ້ານສ່ວນຕົວຂອງນັກຮຽນ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ໂດຍມີຄ່າ $\overline{X} =$ 3.86 ແລະ SD=0.36 ໂດຍສະແດງໃຫ້ເຫັນວ່າ ຍ້ອນຮຽນຈົບແລ້ວກໍ່ບໍ່ໄດ້ສືບຕໍ່ຮຽນໃນລະດັບວິຊາຊີບ ມີຄ່າ $\overline{X} = 4.07$ ແລະ SD=0.79 ຍ້ອນເຂົ້າໃຈວ່າຮຽນມາແລ້ວບໍ່ມີວຽກເຮັດງານທຳ ມີຄ່າ $\overline{X} = 4.04$ ແລະ SD=0.79, ຮຽນໜັງສືບໍ່ໄດ້ ແລະ ບໍ່ເຂົ້າໃຈບົດຮຽນ ມີຄ່າ $\overline{X} =$ 3.99, SD=0.74, ມາໂຮງຮຽນບໍ່ທັນເວລາ, ມັກຂາດໂຮງຮຽນ, ຜິດກົດລະບຽບຫຼາຍເທື່ອ ແລະ ຂີ້ຄ້ານບໍ່ສົນໃຈຕໍ່ການຮຽນ ມີຄ່າ $\overline{X} = 3.96$, SD=0.76 ແລະ SD=0.77 ຕາມລະດັບ, ຍ້ອນເປັນລູກກົກພ້າໄດ້ອາໄສຢູ່ນຳພີ່ນ້ອງ ມີຄ່າ $\overline{X} = 3.84$ ແລະ SD=0.63, ຍ້ອນອ່ານໜັງສືບໍ່ໄດ້ ແລະ ຂຽນໜັງສືບໍ່ເປັນ ມີຄ່າ $\overline{X} = 3.76$ ແລະ SD=0.78, ຍ້ອນບໍ່ມີຄົນຊຸກຍູ້ສົ່ງເສີມຈຶ່ງອອກໂຮງຮຽນ ແລະ ຍ້ອນມີການຕິດບ່າວ, ຕິດສາວກ່ອນໄວອາຍຸກະສຽນ 18 ປີ ມີຄ່າ $\overline{X} = 3.73$, SD=0.68 ແລະ SD=0.72 ຕາມລະດັບ, ຍ້ອນຄວາມຮັບຮູ້ຍັງໜ້ອຍ ແລະ ມີຜົນການຮຽນອ່ອນ ມີຄ່າ $\overline{X} = 3.72$ ແລະ SD=0.72 ແລະ ຍ້ອນມີການພົວພັນກັບສິ່ງເສບຕິດເຊັ່ນ: ຢາບ້າ, ນ້ຳກະທ້ອມ, ຢາສູບໄຟຟ້າ, ເຄຕາມິນ, ຄໍລະເຈນ... ມີຄ່າ $\overline{X} = 3.68$ ແລະ SD=0.36.

3) ຜົນການວິເຄາະລະດັບຄວາມຄິດເຫັນຕໍ່ ປັດໄຈດ້ານຄອບຄົວ

ຜົນການວິເຄາະ ພົບວ່າ ໂດຍລວມແລ້ວ ລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ຕໍ່ປັດໄຈດ້ານສ່ວນຕົວຂອງນັກຮຽນ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ໂດຍມີຄ່າ $\overline{X} =$ 3.80 ແລະ SD=0.44. ເຊິ່ງໃນນີ້ເມື່ອພິຈາລະນາດ້ານເນື້ອໃນຍ່ອຍແລ້ວເຫັນວ່າ: ຍ້ອນຄອບຄົວພໍ່ ແລະ ແມ່ ແຍກກັນຢູ່ ມີຄ່າ $\overline{X} = 3.89$ ແລະ SD=0.78 ຍ້ອນຕົນເອງເປັນແຮງງານຫຼັກຂອງຄອບຄົວຕ້ອງອອກໂຮງຮຽນມາຊ່ວຍວຽກຄອບຄົວ ມີຄ່າ $\overline{X} = 3.89$ ແລະ SD=0.07, ຄອບຄົວມີລູກຫຼາຍຄົນ ແລະ ການລ້ຽງດູສົ່ງເສີມບໍ່ເຕັມເມັດເຕັມໜ່ວຍ ມີຄ່າ $\overline{X} = 3.81$, SD=0.76, ຍ້ອນຄອບຄົວບໍ່ໃຫ້ຄວາມສຳຄັນກັບການສຶກສາ, ຂາດການສະໜັບສະໜູນຈາກຄອບຄົວ ມີຄ່າ $\overline{X} =$ 3.71, SD=0.71 ແລະ ພໍ່-ແມ່ໃຫ້ອອກໂຮງຮຽນສ້າງຄອບຄົວ ມີຄ່າ $\overline{X} = 3.69$ ແລະ SD=0.73.

4) ຜົນການວິເຄາະລະດັບຄວາມຄິດເຫັນຕໍ່ ປັດໄຈດ້ານເສດຖະກິດ

ຜົນການວິເຄາະ ພົບວ່າ ໂດຍລວມແລ້ວ ລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ຕໍ່ປັດໄຈດ້ານເສດຖະກິດແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ໂດຍມີຄ່າ $\overline{X} = 3.92$ ແລະ SD=0.43. ເຊິ່ງໃນນີ້ເມື່ອພິຈາລະນາດ້ານເນື້ອໃນຍ່ອຍແລ້ວເຫັນວ່າ: ຄອບຄົວບໍ່ມີເງິນສົ່ງໃຫ້ລູກຮຽນ ມີຄ່າ $\overline{X} = 4.05$ ແລະ SD=0.71, ຍ້ອນຄ່າຄອງຊີບຂອງສັງຄົມມີການເພີ່ມຂຶ້ນສູງ ມີຄ່າ $\overline{X} = 4.03$ ແລະ SD=0.75, ຮອງລົງມາແມ່ນຍ້ອນຄອບຄົວບໍ່ໄດ້ເຮັດທຸລະກິດຄ້າ-ຂາຍຈຶ່ງບໍ່ສາມາດສົ່ງເສີມໃຫ້ລູກຮຽນໜັງສື ແລະ ຄອບຄົວບໍ່ມີອາຊີບທີ່ໝັ້ນຄົງ ມີຄ່າ $\overline{X} = 3.92$, SD=0.71 ແລະ $\overline{X} = 3.91$, SD=0.73 ຕາມລະດັບ, ເສດຖະກິດຂອງຄອບຄົວບໍ່ເອື້ອອຳນວຍຄວາມສະດວກໃນການສົ່ງລູກຮຽນ ແລະ ຍ້ອນການຮຽນມີຄ່າໃຊ້ຈ່າຍສູງ ມີຄ່າ $\overline{X} =$

3.88, SD=0.80 ແລະ $\overline{X} = 3.87$, SD=0.72 ມີຄ່າ $\overline{X} = 3.71$ ຕາມລະດັບ ແລະ ຜູ້ປົກຄອງບໍ່ສາມາດຊື້ເຄື່ອງນຸ່ງ, ປື້ມແບບຮຽນ ແລະ ອື່ນໆມີຄ່າ $\overline{X} = 3.84$ ແລະ SD=0.78.

5) ຜົນການວິເຄາະລະດັບຄວາມຄິດເຫັນຕໍ່ ປັດໄຈດ້ານສັງຄົມ

ຜົນການວິເຄາະ ພົບວ່າ ໂດຍລວມແລ້ວ ລະດັບຄວາມຄິດເຫັນຕໍ່ປັດໄຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ ຕໍ່ປັດໄຈດ້ານສັງຄົມແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ໂດຍມີຄ່າ $\overline{X} = 3.90$ ແລະ SD=0.43 ເຊິ່ງໃນນີ້ເມື່ອພິຈາລະນາດ້ານເນື້ອໃນຍ່ອຍແລ້ວເຫັນວ່າ: ຜູ້ທີ່ຮຽນຈົບໄປສ່ວນຫຼາຍບໍ່ມີວຽກເຮັດງານທໍາທີ່ດີ, ຫວ່າງງານ ມີຄ່າ $\overline{X} = 4.20$ ແລະ SD=0.73, ຍ້ອນເຫັນວ່າຮຸ່ນອ້າຍເອື້ອຍສ່ວນຫຼາຍຮຽນບໍ່ຈົບຊັ້ນມັດທະຍົມຕອນປາຍ ແລະ ຮຸ່ນອ້າຍເອື້ອຍຊັກຊວນໄປໃນທາງທີ່ຜິດຈຶ່ງປະລະການຮຽນ ມີຄ່າ $\overline{X} = 3.97$, SD=0.73 ແລະ $\overline{X} = 3.95$, SD=0.73, ຍ້ອນປະເພນີ ແລະ ອິດທິພົນທາງສັງຄົມ ຈຶ່ງອອກໂຮງຮຽນແຕ່ງງານ ມີຄ່າ $\overline{X} = 3.75$, SD=0.63 ແລະ ຍ້ອນຄ່ານິຍົມຂອງສັງຄົມ ມີຄ່າ $\overline{X} = 3.69$ ແລະ SD=0.73.

3.2 ປັດໄຈທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງ ປາກອູ ແຂວງຫຼວງພະບາງ

ຜົນການວິເຄາະຄວາມສໍາພັນຂອງຕົວປ່ຽນອິດສະຫຼະດ້ວຍກັນ ແລະ ຕົວປ່ຽນອິດສະ ຫຼະ ກັບ ຕົວປ່ຽນຕາມ ເຫັນວ່າ ຄ່າສໍາປະສິດສະຫະສໍາພັນ ຂອງຕົວປ່ຽນອິດສະຫຼະແຕ່ລະຄູ່ ມີຄ່ານ້ອຍກວ່າ 0.8, ສະແດງວ່າ ຕົວປ່ຽນອິດສະຫຼະຂອງສົມຜົນໃນແບບຈໍາລອງຂອງການຄົ້ນຄວ້າບໍ່ມີບັນຫາພະຫຸສໍາພັນ ຂອງຕົວປ່ຽນອິດສະຫຼະ (Multi-collinearity). ສະນັ້ນ, ປັດໄຈດ້ານຄອບຄົວ ($X_3$), ປັດໄຈດ້ານສ່ວນຕົວຂອງນັກຮຽນ ($X_2$), ປັດໄຈດ້ານສະຖານການສຶກສາ ($X_1$), ປັດໄຈດ້ານດ້ານເສດຖະກິດ ($X_4$) ແລະ ປັດໄຈດ້ານສັງຄົມ ($X_5$) ໄປປະເມີນສົມຜົນການຖົດຖອຍແບບຈໍາລອງສົມຜົນການຖົດຖອຍແບບພະຫຸພົດດ້ວຍວິທີຂອງ Stepwise ເພື່ອພະຍາກອນ ປັດໄຈທີ່ເຮັດໃຫ້ນັກຮຽນຊັ້ນມັດທະຍົມສຶກສາປະລະການຮຽນ ພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ.

ໃນນັ້ນ, ການວິເຄາະຄວາມສໍາພັນ ລະຫວ່າງປັດໄຈດ້ານຕ່າງໆທີ່ມີຜົນຕໍ່ການປະລະການຮຽນ ພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ດ້ວຍວິທີການວິເຄາະທາງສະຖິຕິແບບຖົດຖອຍພະຫຸພົດ ແລະ ການປະເມີນຄ່າດ້ວຍວິທີການນໍາເອົາຕົວປ່ຽນທັງໝົດເຂົ້າໄປໃນສົມຜົນ ເປັນການວິເຄາະສົມຜົນຖົດຖອຍພະຫຸຄູນ ແບບຂັ້ນຕອນ (Multiple regression analysis) ເຊິ່ງການຄົ້ນຄວ້າຄັ້ງນີ້ປະກອບດ້ວຍຕົວປ່ຽນອິດສະຫຼະ ທີ່ເປັນປັດໄຈທັງໝົດ 5 ຕົວປ່ຽນເຊິ່ງປັດໄຈທີ່ມີຜົນຕໍ່ການປະລະການຮຽນ ຂອງນັກຮຽນ ພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ. (Y) ປະກອບມີ 5 ປັດໄຈທີ່ມີຄວາມສໍາພັນໃນທິດທາງດຽວກັນ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.05 ແລະ ຈັດລຽງແຕ່ມີຄວາມສໍາພັນຫຼາຍມາຫາໜ້ອຍຕາມລໍາດັບ ໄດ້ແກ່: ປັດໄຈດ້ານຄອບຄົວ ($X_3$) ມີຄວາມສໍາພັນຫຼາຍກວ່າໝູ່ ເຊິ່ງມີຄ່າ R=0.479 ແລະ P-value = 0.000, ຕໍ່ມາແມ່ນປັດໄຈດ້ານສ່ວນຕົວຂອງນັກຮຽນ ($X_2$) ມີຄ່າ R=0.407 ແລະ P-value = 0.000, ປັດໄຈດ້ານສະຖານການສຶກສາ ($X_1$) ມີຄ່າ R=0.402 ແລະ P-value = 0.000, ປັດໄຈດ້ານດ້ານເສດຖະກິດ ($X_4$) ເຊິ່ງມີຄ່າ R=0.340 ແລະ P-value = 0.001 ແລະ ສຸດທ້າຍແມ່ນປັດໄຈດ້ານສັງຄົມ ($X_5$) ມີຄ່າ R=0.107 ແລະ P-value = 0.180.

ແບບຈໍາລອງ ທີ່ໄດ້ຈາກການຖົດຖອຍພະຫຸຄູນ ຫຼື ການພະຍາກອນ (Model Summary) ຂອງປັດໄຈທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ເຫັນວ່າ ຕົວປ່ຽນອິດສະຫຼະ ໄດ້ແກ່ ປັດໄຈດ້ານຄອບຄົວ ($X_3$) ແລະ ປັດໄຈດ້ານສະຖານການສຶກສາ ($X_1$) ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.05 ແມ່ນມີການພົວພັນກັບ ສະພາບປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ (Y) ເຊິ່ງມີຄ່າຂອງ R = 0.230 ຫຼື ສາມາດໃຊ້ໄດ້ເຖິງ 23.00% ດ້ວຍລະດັບຄວາມຄາດເຄື່ອນຂອງການປະເມີນ 0. 34135 ເຊິ່ງໝາຍເຖິງຄວາມຜິດພາດທີ່ເກີດຈາກການພະຍາກອນ ໂດຍສະເລ່ຍຂອງຕົວປ່ຽນອິດສະຫຼະທັງໝົດ ທີ່ມີຜົນຕໍ່ຕົວປ່ຽນຕາມ ເທົ່າກັບ 34.135%.

ຜົນການວິເຄາະການຖົດຖອຍພະຫຸຄູນ ປັດໄຈທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ພົບວ່າ ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສະຖານການສຶກສາ ແມ່ນມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ. ໃນນັ້ນ ປັດໄຈດ້ານຄອບຄົວ ແມ່ນມີຜົນຕໍ່ຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ຫຼາຍທີ່ສຸດ ເຊິ່ງມີຄ່າສໍາປະສິດການຖົດຖອຍເທົ່າກັບ 0.324 ແລະ ຕໍ່ມາແມ່ນປັດໄຈດ້ານສະຖານການສຶກສາ ມີຄ່າສໍາປະສິດການຖົດຖອຍເທົ່າກັບ 0.256.

ສະນັ້ນ, ຈຶ່ງສາມາດນໍາເອົາຄ່າສໍາປະສິດການຖົດຖອຍພະຫຸຄູນຂອງຕົວປ່ຽນພະຍາກອນ ທີ່ມາຂຽນເປັນສົມຜົນພະຍາກອນ ປັດໄຈທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ (Y) ໃນຮູບແບບຄະແນນດິບ ຈະໄດ້ສົມຜົນການຖົດຖອຍແບບພະຫຸຄູນ ດັ່ງນີ້:

$$Y = 1.867 + 0.324X_3 + 0.256X_1$$

ສົມຜົນພະຍາກອນ ປັດໄຈທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ (Y) ໃນຮູບແບບຄະແນນມາດຖານ ຈະໄດ້ສົມຜົນການຖົດຖອຍແບບພະຫຸຄູນ ດັ່ງນີ້:

$$Y' = 0.377X_3 + 0.243X_1$$

ສະນັ້ນ, ຜົນການທົດສອບຄ່າ Sig ມີຄ່ານ້ອຍກວ່າລະດັບຄວາມສໍາຄັນ 0.05 ໝາຍຄວາມວ່າ ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສະຖານການສຶກສາ ແມ່ນມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ. ເມື່ອພິຈະລະນາຕົວປ່ຽນອິດສະຫຼະ ທີ່ມີອໍານາດໃນການພະຍາກອນ ແລະ ສາມາດອະທິບາຍຄວາມປ່ຽນແປງ ດ້ານປັດໄຈຕ່າງໆ ທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ໄດ້ເຖິງ 23.00%.

## 4. ວິພາກຜົນ

1) ລະດັບຄວາມຄິດເຫັນຕໍ່ປັດໄຈດ້ານສະຖານການສຶກສາ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ເຊັ່ນ: ໂຮງຮຽນບໍ່ມີຫໍພັກຮອງຮັບ

ນັກຮຽນທີ່ຢູ່ບ້ານໄກ, ຍ້ອນໂຮງຮຽນຢູ່ໄກ ຍາກຕໍ່ການເດີນທາງໄປ-ມາ, ໂຮງຮຽນບໍ່ມີນະໂຍບາຍຕໍ່ນັກຮຽນທຸກຍາກ ແລະ ນັກຮຽນຊົນເຜົ່າ ແລະ ຂາດຄູສອນ, ອຸປະກອນຮັບໃຊ້ການຮຽນ-ການສອນບໍ່ພຽງພໍ, ຂໍ້ຈຳກັດດ້ານພາສາທາງທີ່ໃຊ້ເຂົ້າໃນການຮຽນ-ການສອນ, ຍ້ອນການຖືກຈຳແນກຈາກຄູ ຫຼື ໝູ່ຄູ່ພາຍໃນໂຮງຮຽນ ແລະ ຍ້ອນບໍ່ມີການຊ່ວຍເຫຼືອດ້ານການຮຽນສຳລັບນັກຮຽນທີ່ຮຽນອ່ອນ. ລະດັບຄວາມຄິດເຫັນຕໍ່ປັດໃຈດ້ານສ່ວນຕົວຂອງນັກຮຽນ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ເຊັ່ນ: ຍ້ອນຮຽນຈົບແລ້ວກໍ່ບໍ່ໄດ້ສືບຕໍ່ຮຽນໃນລະດັບວິຊາຊີບ, ຍ້ອນເຂົ້າໃຈວ່າຮຽນມາແລ້ວບໍ່ມີວຽກເຮັດງານທຳ, ຮຽນໜັງສືບໍ່ໄດ້ ແລະ ບໍ່ເຂົ້າໃຈບົດຮຽນ, ມາໂຮງຮຽນບໍ່ທັນເວລາ, ມັກຂາດໂຮງຮຽນ, ຜິດກົດລະບຽບຫຼາຍເທື່ອ ແລະ ຂີ້ຄ້ານບໍ່ສົນໃຈຕໍ່ການຮຽນ, ຍ້ອນເປັນລູກກຳພ້າໄດ້ອາໄສຢູ່ນຳພີ່ນ້ອງ, ຍ້ອນອ່ານໜັງສືບໍ່ໄດ້ ແລະ ຂຽນໜັງສືບໍ່ເປັນ, ຍ້ອນບໍ່ມີຄົນຊຸກຍູ້ສົ່ງເສີມຈຶ່ງອອກໂຮງຮຽນ ແລະ ຍ້ອນມີການຕິດບ່າວ, ຕິດບ່າວ-ສາວ ກ່ອນໄວອາຍຸກະສຽນ 18 ປີ, ຍ້ອນຄວາມຮັບຮູ້ຍັງໜ້ອຍ ແລະ ມີຜົນການຮຽນອ່ອນ ແລະ ຍ້ອນມີການພົວພັນກັບສິ່ງເສບຕິດເຊັ່ນ: ຢາບ້າ, ນ້ຳກະທ້ອມ, ຢາສູບໄຟຟ້າ, ເຄຕາມີນ, ຄໍລະເຈນ... ລະດັບຄວາມຄິດເຫັນຕໍ່ປັດໃຈດ້ານຄອບຄົວຂອງນັກຮຽນ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ເຊັ່ນ: ຍ້ອນຄອບຄົວພໍ່ ແລະ ແມ່ ແຍກກັນຢູ່, ຍ້ອນຕົນເອງເປັນແຮງງານຫຼັກຂອງຄອບຄົວຕ້ອງອອກໂຮງຮຽນມາຊ່ວຍວຽກຄອບຄົວ, ຄອບຄົວມີລູກຫຼາຍຄົນ ແລະ ການລ້ຽງດູສົ່ງເສີມບໍ່ເຕັມເມັດເຕັມໜ່ວຍ, ຍ້ອນຄອບຄົວບໍ່ໃຫ້ຄວາມສຳຄັນກັບການສຶກສາ, ຂາດການສະໜັບສະໜູນຈາກຄອບຄົວ ແລະ ພໍ່-ແມ່ໃຫ້ອອກໂຮງຮຽນສ້າງຄອບຄົວ. ລະດັບຄວາມຄິດເຫັນຕໍ່ປັດໃຈດ້ານເສດຖະກິດແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ເຊັ່ນ: ຄອບຄົວບໍ່ມີເງິນສົ່ງໃຫ້ລູກຮຽນ, ຍ້ອນຄ່າຄອງຊີບຂອງສັງຄົມມີການເພີ່ມຂຶ້ນສູງ, ຍ້ອນຄອບຄົວບໍ່ໄດ້ເຮັດທຸລະກິດຄ້າ-ຂາຍຈຶ່ງບໍ່ສາມາດສົ່ງເສີມໃຫ້ລູກຮຽນໜັງສື ແລະ ຄອບຄົວບໍ່ມີອາຊີບທີ່ໝັ້ນຄົງ, ເສດຖະກິດຂອງຄອບຄົວບໍ່ເອື້ອອຳນວຍຄວາມສະດວກໃນການສົ່ງລູກຮຽນ ແລະ ຍ້ອນການຮຽນມີຄ່າໃຊ້ຈ່າຍສູງ ແລະ ຜູ້ປົກຄອງບໍ່ສາມາດຊື້ເຄື່ອງນຸ່ງ, ປຶ້ມແບບຮຽນ ແລະ ອື່ນໆ. ລະດັບຄວາມຄິດເຫັນຕໍ່ປັດໃຈດ້ານສັງຄົມ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ ເຊັ່ນ: ຜູ້ທີ່ຮຽນຈົບໄປສ່ວນຫຼາຍບໍ່ມີວຽກເຮັດງານທຳທີ່ດີ, ຫວ່າງງານ, ຍ້ອນເຫັນວ່າຮຸ່ນອ້າຍເອື້ອຍສ່ວນຫຼາຍຮຽນບໍ່ຈົບຊັ້ນມັດທະຍົມຕອນປາຍ ແລະ ຮຸ່ນອ້າຍເອື້ອຍຊັກຊວນໄປໃນທາງທີ່ຜິດຈຶ່ງປະລະການຮຽນ, ຍ້ອນປະເພນີ ແລະ ອິດທິພົນທາງສັງຄົມ ຈຶ່ງອອກໂຮງຮຽນແຕ່ງງານ ແລະ ຍ້ອນຄ່ານິຍົມຂອງສັງຄົມ ເຊິ່ງສດຄ່ອງກັບການສຶກສາຂອງ Chuchuay & Montaisong (2021) ຜົນການສຶກສາພົບວ່າ ລະດັບຄວາມຄິດເຫັນຕໍ່ປັດໃຈທີ່ສົ່ງຜົນຕໍ່ການອອກກາງປີມີ 4 ປັດໃຈ ປະກອບດ້ວຍ ປັດໃຈດ້ານຜູ້ຮຽນ ປັດໃຈດ້ານຄອບຄົວ ປັດໃຈດ້ານຄູຜູ້ສອນ ແລະ ປັດໃຈດ້ານສະພາບແວດລ້ອມຂອງສະຖານສຶກສາ ໃນພາບລວມຢູ່ລະດັບປານກາງ ແລະ ແຕກຕ່າງກັບການຄົ້ນຄວ້າຂອງ Ponpichai & Uieng (2019) ສ່ວນໃຫຍ່ມີລະດັບຄວາມຄິດເຫັນໃນລະດັບປານກາງ ໄດ້ແກ່ ສາເຫດການອອກໂຮງຮຽນກາງປີ ແມ່ນຍ້ອນດ້ານສະຖານການສຶກສາ, ຍ້ອນນິດໄສສ່ວນບຸກຄົນ, ຍ້ອນດ້ານຄອບຄົວ, ຍ້ອນດ້ານເສດຖະກິດ ແລະ ຍ້ອນດ້ານສັງຄົມ.

2) ປັດໃຈທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ພົບວ່າ ປັດໃຈດ້ານຄອບຄົວ ແລະ ປັດໃຈດ້ານສະຖານການສຶກສາ ແມ່ນມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ, ໃນນັ້ນ ປັດໃຈດ້ານຄອບຄົວ ແມ່ນມີຜົນຕໍ່ຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ຫຼາຍທີ່ສຸດ ແລະ ຕໍ່ມາແມ່ນປັດໃຈດ້ານສະຖານການສຶກສາ, ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Sughra et al. (2022) ທີ່ຄົ້ນຄວ້າກ່ຽວກັບ ປັດໃຈທີ່ສົ່ງຜົນຕໍ່ການອອກໂຮງຮຽນ ຂອງນັກຮຽນ ຜົນພົບວ່າ ການມີສ່ວນຮ່ວມຂອງພໍ່ແມ່ ແລະ ສະມາຊິກຊຸມຊົນ ເປັນສິ່ງສຳຄັນຢ່າງຍິ່ງ; ສອດຄ່ອງກັບ Etzion & Romi (2026) ມີຜົນການຄົ້ນຄວ້າພົບວ່າ ມີປັດໃຈທາງດ້ານເສດຖະກິດ ແລະ ສັງຄົມ ຖືເປັນປັດໃຈທີ່ສຳຄັນທີ່ນຳໄປສູ່ການອອກໂຮງຮຽນກາງປີ; ສອດຄ່ອງກັບ Praraksa (2023) ມີຜົນການຄົ້ນຄວ້າພົບວ່າ ສາເຫດຫຼັກຂອງການອອກກາງປີເກີດຂຶ້ນຈາກຕົວນັກຮຽນເອງ ໂດຍມີປັດໃຈອື່ນໆເຊັ່ນ ປັດໃຈດ້ານຄອບຄົວ, ໂຮງຮຽນ ແລະ ຊຸມຊົນເຂົ້າມາມີສ່ວນດ້ວຍ; ສອດຄ່ອງກັບ Cheama et al. (2021) ມີຜົນການຄົ້ນຄວ້າພົບວ່າ ປັດໃຈຂອງການອອກກາງປີຂອງນັກຮຽນທີ່ໄດ້ຮັບຜົນກະທົບຈາກສະຖານະພາບທາງເສດຖະກິດ ແລະ ສັງຄົມຂອງຄອບຄົວ; ສອດຄ່ອງກັບການຄົ້ນຄວ້າຂອງ Nurmalitasari et al. (2023) ຜົນການຄົ້ນຄວ້າພົບວ່າ ປັດໃຈດ້ານເສດຖະກິດ ແມ່ນມີອິດທິພົນຫຼາຍທີ່ສຸດຕໍ່ກັບນັກຮຽນທີ່ເລີກຮຽນໃນການສຶກສາຊັ້ນສູງ; ສອດຄ່ອງກັບ Choothai (2020) ພົບວ່າ ປັດໃຈທີ່ມີຜົນຕໍ່ການປະລະການຮຽນຂອງນັກຮຽນໃນປະເທດໄທ ໄດ້ແກ່ ປັດໃຈທາງນະໂຍບາຍການສຶກສາ ແລະ ການຂະຫຍາຍໂອກາດໃນການເຂົ້າເຖິງການສຶກສາ.

## 5. ສະຫຼຸບ

ລະດັບຄວາມຄິດເຫັນຕໍ່ກັບປັດໃຈການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາ ໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ທີ່ປະລະການຮຽນ ໂດຍລວມແລ້ວ ແມ່ນຢູ່ໃນລະດັບຄວາມເປັນຈິງຫຼາຍ, ໃນນັ້ນ ຫຼາຍກວ່າໝູ່ແມ່ນ ດ້ານສະຖານການສຶກສາ, ຮອງລົງມາແມ່ນ ດ້ານເສດຖະກິດ, ດ້ານສັງຄົມ, ດ້ານສ່ວນຕົວ ແລະ ດ້ານຄອບຄົວ ຕາມລຳດັບ.

ປັດໃຈທີ່ມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ພົບວ່າ ປັດໃຈດ້ານຄອບຄົວ ແລະ ປັດໃຈດ້ານສະຖານການສຶກສາ ແມ່ນມີຜົນຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ, ໃນນັ້ນ ປັດໃຈດ້ານຄອບຄົວ ແມ່ນມີຜົນຕໍ່ຕໍ່ການປະລະການຮຽນພາຍໃນກຸ່ມຫາດປາງ ເມືອງປາກອູ ແຂວງຫຼວງພະບາງ ຫຼາຍທີ່ສຸດ ແລະ ຕໍ່ມາແມ່ນປັດໃຈດ້ານສະຖານການສຶກສາ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025)*, ໜ້າ 17.

ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ. (2025). *ບົດສະຫຼຸບ ແລະ ທິດທາງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແຂວງຫຼວງພະບາງ ປະຈຳສົກປີ 2024-2025.*

ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ ແຂວງຫຼວງພະບາງ. (2025). *ບົດສະຫຼຸບ ແລະ ທິດທາງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແຂວງຫຼວງພະບາງ ປະຈຳສົກປີ 2024-2025*.

Appleton, J. J., Christenson, S. L., & Furlong, M. J. (2008). Student engagement with school: Critical conceptual and methodological issues, *Psychology in the Schools, 45*(5), 369–386.

Chuchuay, S., & Montaisong, T. (2021). Guidelines for preventing dropout of students, vocational certificate of Phranakhon Si Ayutthaya Technical College. *Journal of Educational Administration and Leadership, 9*(36), 275-284.

Choothai, P. (2020). *Factors affecting school dropout: The case of Thailand* [MasterThesis], Chulalongkorn University.

Deci, E. L., & Ryan, R. M. (2000). The "what" and "why" of goal pursuits: Human needs and the self-determination of behavior, *Psychological Inquiry, 11*(4), 227–268.

Etzion, D., & Romi, S. (2026). Dropping out of school: early identification of risk factors. *Educ Asse Eval Acc*, https://doi.org/10.1007/s11092-026-09478-z

Finn, J. D. (1989). Withdrawing from school, *Review of Educational Research, 59*(2), 117–142.

Fredricks, J. A., Blumenfeld, P. C., & Paris, A. H. (2004). School engagement: Potential of the concept, state of the evidence. *Review of Educational Research, 74*(1), 59–109.

Krejcie, R.V., & Morgan, E.W. (1970). *Educational and Psychological Measurement*, p. 608 – 609.

Nurmalitasari, N., Zalizah, A.L., & Faizuddin, M.N. (2023). Factors Influencing Dropout Students in Higher Education. *Education Research International,* 3, 1-13. DOI:10.1155/2023/7704142

Ponpichai, W., & Uieng, J. (2019). Factors Affecting to Course of School Dropout of the Youth in Sikao District, Trang Province. *Humanities and Social Sciences Journal, 12*(1), 111-142.

Praraksa, P. (2023). The development of preventing and monitoring guidelines of student dropout in schools under Samutprakan Primary Educational Service Area Office 1. *Journal Universitas Muhammadiyah Gresik Engineering Social Science and Health, 2*(1), 269. DOI:10.30587/umgeshic.v2i1.5309

Sughra, G., Iqbal, M., & Amin, S. (2022). Factors affecting on drop-out of students at F.Sc Level:. A Case Study. *International Research Journal of Management and Social Sciences*, 3(2), 29- 37. DOI:10.53575/irjmss.v3.2.3(22)29-37